# ໂຄງການຊ່ວຍເຫລືອແກ່ຜູ້ຢູ່ອາໃສໃນລັດ Massachusetts

## ຊອກຫາບ່ອນໃຫ້ການຊ່ວຍເຫລືອ, ໃຫ້ຂໍ້ມູນ ແລະ ການນຳສົ່ງໄດ້ຢູ່ໃສ

Commonwealth of Massachusetts ແລະອົງການທີ່ເປັນຮຸ້ນສ່ວນໃຫ້ການບໍລການຫລາຍໆແບບແກ່ບຸກຄົນທີ່ໄດ້ຂໍເອົາເງິນຫວ່າງງານຈົນໝົດ ຫລືໃກ້ຈະໝົດແລ້ວ. ບຸກຄົນຫວ່າງງານອາດມີສິດເໝາະສົມໄດ້ຮັບການຊ່ວຍເຫລືອເພື່ອໃຫ້ສາມາດຕອບສະໜອງຄວາມຕ້ອງການພື້ນຖານຂອງຕົນ ພ້ອມກັບການບໍລິການດ້ານອື່ນໆ ໄດ້ເຊັ່ນການປິ່ນປົວດູແລສຸກຂະພາບ, ການໃຫ້ຄຳປຶກສາດ້ານຈິດໃຈ, ການຊ່ວຍເຫລືອດ້ານການຫາວຽກເຮັດ ແລະ ຝຶກອົບຮົມ, ແລະ ດ້ານ ອື່ນໆ ອີກຫລາຍດ້ານ. ທ່ານສາມາດໂທນ້ຳເບີ 2-1-1 ເພື່ອຈະຮຽນຮູ້ກ່ຽວກັບແຫລ່ງການຊ່ວຍເຫລືອຫລາຍໆຢ່າງ ຫລື ພົວພັນກັບສຳນັກງານ ແລະ ອົງການເຫລົ່ານີ້ໂດຍກົງເພື່ອຂໍຂໍ້ມູນກ່ຽວກັບໂຄງການຊ່ວຍເຫລືອຂອງເຂົາເຈົ້າ.

Massachusetts 2-1-1™
Get Connected. Get Answers.
A Partnership of United Way and MAIRS

**2-1-1** ມີການຊ່ວຍເຫລືອກຽມ

ໄວ້ໃຫ້ແກ່ທ່ານຕະຫລອດ24 ຊົ່ວໂມງ, 7ມື້ຕໍ່ອາທິດແລະ ມີພະນັກງານໃຫ້ຄຳປຶກສາທີ່ສາມາດຊ່ວຍທ່ານໃຫ້ໄດ້ຮັບການຊ່ວຍເຫລືອທີ່ທ່ານຕ້ອງການໄດ້ຕະຫລອດເວລາ. ການໂທລະສັບທຸກຄັ້ງແມ່ນຟຣີແລະ ເປັນຄວາມລັບ. ຜູ້ໃຫ້ຄຳປຶກສາທີ່ໄດ້ຜ່ານການຝຶກອົບຮົມສາມາດຊ່ວຍທ່ານແກ້ໄຂບັນຫາຫຍຸ້ງຍາກໄດ້ເກືອບໝົດທຸກຢ່າງເຊັ່ນທາງເລືອກໃນການດູແລເດັກ, ການຝຶກອົບຮົມງານຄືນ, ບັນຫາສຸກຂະພາບຈິດ ຫລື ການຊ່ວຍເຫລືອຊອກຫາເຮືອນຢູ່ແລະບ່ອນພັກເຊົ່າ.

**www.mass211help.org**

**Commonwealth of Massachusetts**
**Deval L. Patrick, Governor**
**Timothy P. Murray, Lt. Governor**

**Executive Office of Labor and Workforce Development**
**Joanne F. Goldstein, Secretary**

### HEALTHCARE COVERAGE (ການຄຸ້ມຄອງປະກັນໄພສຸຂພາບ)

**MassHealth**
ຈ່າຍຄ່າການປິ່ນປົວດູແລສຸກຂະພາບແກ່ຄົນບາງຄົນທີ່ມີລາຍໄດ້ຕໍ່າ ຫລື ປານກາງທີ່ກຳລັງອາໃສ ຢູ່ໃນລັດ Massachusetts.
**www.mass.gov/masshealth** **800-841-2900**

### FOOD AND DIRECT ASSISTANCE (ການຊ່ວຍເຫລືອດ້ານອາຫານໂດຍກົງ)

**Food Assistance (ການຊ່ວຍເຫລືອດ້ານອາຫານ)**
ຜົນປະໂຫຍດຈາກ Supplemental Nutrition Assistance Program (SNAP) (ເມື່ອກ່ອນເອີ້ນວ່າ Food Stamps) ຊ່ວຍເຫລືອຄອບຄົວທີ່ມີລາຍໄດ້ຕໍ່າຊື້ອາຫານທີ່ມີທາດບຳລຸງຢູ່ຮ້ານຂາຍອາຫານ, ຮ້ານຂາຍເຄື່ອງຍ່ອຍເພື່ອຄວາມສະດວກແລະຮ້ານຂາຍຢາຕ່າງໆ.
**www.mass.gov/snap** **866-950-3663**

**Direct Assistance (ການຊ່ວຍເຫລືອໂດຍກົງ)**

**ການໃຫ້ຄວາມຊ່ວຍເຫລືອໃນຍາມຂ້າມຜ່ານຄວາມຫຍຸ້ງຍາກແກ່ຄອບຄົວທີ່ມີເດັກນ້ອຍທີ່ຢູ່ໃນຄວາມດູແລ (TAFDC)**
ໃຫ້ຄວາມຊ່ວຍເຫລືອເປັນເງິນສົດແກ່ຄອບຄົວທີ່ມີເດັກນ້ອຍແລະ ຜູ້ຍິງຖືພາໃນ 120 ມື້ກ່ອນເກີດລູກທີ່ມີຊັ◌ໍບສິນ ຫລື ລາຍໄດ້ໜ້ອຍ, ຫລື ບໍ່ມີຫຍັງເລີຍ.

**ການໃຫ້ຄວາມຊ່ວຍເຫລືອແກ່ຜູ້ເຖົ້າ, ເສັຽອົງຄະ ແລະ ເດັກນ້ອຍໃນຍາມສຸກເສີນ (EAEDC)**
ການໃຫ້ຄວາມຊ່ວຍເຫລືອແກ່ຜູ້ເຖົ້າ, ເສັຽອົງຄະ ແລະ ເດັກນ້ອຍ (EAEDC) ແມ່ນໂຄງການທີ່ໄດ້ຮັບເງິນ ອຸດໜູນຈາກຣັດທີ່ໃຫ້ການຊ່ວຍເປັນເງິນສົດແກ່ຜູ້ທີ່ຕ້ອງການຄວາມຊ່ວຍເຫລືອເພື່ອເຮັດໃຫ້ຊີວິດຂອງ ພວກເຂົາເຈົ້າມີຄວາມອຸ່ນອ່ຽນຂຶ້ນ.

**Application Information Hotline (ສາຍດ່ວນເພື່ອການຊ່ວຍເຫລືອດ້ານການເຮັດຄຳຮ້ອງ)**
(ສຳລັບ TAFDC ແລະ EAEDC).
ເພື່ອຂໍຂໍ້ມູນເພີ່ມເຕີມ ໃຫ້ໄປເບິ່ງທີ່ Department of Transitional Assistance.
**www.mass.gov/dta** **800-249-2007**

**Foodsource Hotline - Project Bread (ສາຍດ່ວນເພື່ອການຊ່ວຍເຫລືອດ້ານອາຫານ) - ໂຄງການເຂົ້າຈີ່**
ເພື່ອຊອກຫາບ່ອນແຈກອາຫານ ແລະແຫລ່ງໂພສະນາການອື່ນໆໃນຊຸມຊົນຂອງທ່ານໃຫ້ເບິ່ງໃນ.
**www.projectbread.org** **800-645-8333**

### HOUSING RESOURCES (ແຫລ່ງຊ່ວຍເຫລືອດ້ານເຮືອນຢູ່)

**Mass Housing Consumer Education Centers (ສູນກາງການສຶກສາແກ່ຜູ້ຊົມໃຊ້ເຮືອນ Mass)**
ສູນກາງເກົ້າແຫ່ງຢູ່ທົ່ວລັດ Massachusettsໃຫ້ຂໍ້ມູນດ້ານເຮືອນຢູ່ອາໃສ ແລະການນຳສົ່ງ. ໃຫ້ການຕິດຕໍ່ກັບການປ້ອງກັນບໍ່ໃຫ້ເຮືອນຖືກຢຶດ, ການຊ່ວຍເຫຼືອດ້ານເຊົ່າເຮືອນ ແລະ ໃຫ້ເງິນຊ່ວຍເຫລືອເຊົ່າເຮືອນ, ຊອກຫາເຮືອນ, ໃຫ້ເຮືອນພັກຊົ່ວຄາວແລະການຊ່ວຍເຫລືອແກ່ຄົນນອນຕາມຖະໜົນ ແລະ ອື່ນໆອີກ.
**www.masshousinginfo.org** **800-224-5124**

**Department of Housing and Community Development** (ພະແນກວ່າດ້ວຍເຮືອນຢູ່ອາໃສ ແລະ ພັດທະນາຊຸມຊົນ)
ສຳລັບການຊ່ວຍເຫຼືອດ້ານເຮືອນຢູ່ອາໃສ, ທີ່ພັກ ແລະ ເຊື້ອເພີງ.
ຂະແໜງຊ່ວຍເຮັດໃຫ້ມີເຮືອນຢູ່ອາໃສທີ່ໝັ້ນຄົງ **877-418-3308**
ຂະແໜງຊ່ວຍເຫຼືອດ້ານເຊື້ອເພີງ ແລະປ້ອງກັນເຮືອນໃຫ້ທົນຕໍ່ສະພາບອາກາດ **800-632-8175**
ສຳລັບການຊ່ວຍເຫຼືອດ້ານເຮືອນຢູ່ຂອງຫລວງ ແລະ ເຊົ່າເຮືອນ **617-573-1150**
**www.mass.gov/dhcd**

**Foreclosure Assistance (ການຊ່ວຍເຫຼືອປ້ອງກັນບໍ່ໃຫ້ເຮືອນຖືກຢຶດ)**
ການໃຫ້ຄຳປຶກສາບໍ່ໃຫ້ເຮືອນຖືກຢຶດ ແລະໃຫ້ການຊ່ວຍເຫຼືອແກ່ຜູ້ມີເຮືອນ
**www.mass.gov/ocabr** **888-995-4673**

### VETERANS' BENEFITS (ຜົນປະໂຫຍດຂອງນັກຮົບເກົ່າ)

**Department of Veterans' Services (ພະແນກບໍລິການແກ່ນັກຮົບເກົ່າ)**
ຜົນປະໂຫຍດ ແລະ ແຫລ່ງຊ່ວຍເຫລືອສຳລັບ ນັກຮົບເກົ່າ ແລະ ຄອບຄົວຂອງເຂົາເຈົ້າອາດຈະມີໃຫ້ໂດຍຜ່ານເຈົ້າໜ້າທີ່ບໍລິການນັກຮົບເກົ່າ ຢູ່ໃນທ້ອງຖິ່ນຂອງທ່ານ.
**www.mass.gov/veterans** **617-210-5480**

### CHILD SUPPORT ASSISTANCE (ການຊ່ວຍເຫລືອເກັບເງິນຄ່າລ້ຽງດູລູກ)

**Department of Revenue (ພະແນກອາກອນ)**
ສຳລັບການຊ່ວຍເຫຼືອອອກຄຳສັ່ງເກັບເງິນຄ່າລ້ຽງດູລູກ.
**www.mass.gov/cse** **800-332-2733**

### ELDER SERVICES (ການບໍລິການຜູ້ເຖົ້າ)

ຊ່ວຍເຫລືອຜູ້ເຖົ້າ ແລະ ຄອບຄົວຂອງເຂົາເຈົ້າຊອກຫາບໍລິການ ແລະ ໂອກາດ.
**www.mass.gov/elder** **800-243-4636**

### COMMUNITY-BASED RESOURCES (ແຫລ່ງຊ່ວຍເຫລືອທີ່ຕັ້ງຢູ່ໃນຊຸມຊົນ)

**Massachusetts Association For Community Action (MASSCAP)**
ການບໍລິການລວມມີການຊ່ວຍເຫຼືອດ້ານເຊື້ອເພີງ ແລະ ປ້ອງກັນເຮືອນໃຫ້ທົນຕໍ່ສະພາບອາກາດ, ປ້ອງກັນບໍ່ໃຫ້ກາຍເປັນຄົນບໍ່ມີເຮືອນຢູ່, ການຊ່ວຍເຫຼືອສຸກເສີນດ້ານອາຫານ ແລະຝຶກອົບຮົມວຽກງານ.
**www.masscap.org** **617-357-6086**

ກະລຸນາເບິ່ງເບື້ອງຫລັງເພື່ອຢາກຮູ້ຂໍ້ມູນເພີ້ມເຕີມ

# ການຊ່ວຍເຫລືອຊອກຫາວຽກ

## ວຽກ, ອາຊີບ, ການຝຶກອົບຮົມ

ສູນບໍລິການຊອກຫາງານຄົບວົງຈອນຢູ່ບ່ອນດຽວ – ເປັນສູນແຫ່ງຄວາມພະຍາມຮ່ວມມືກັນລະຫວ່າງອົງການຂອງລັດ ແລະ ທ້ອງຖິ່ນຫລາຍ ອົງການ, ຫົວໜ່ວຍ ທຸລະກິດ ແລະ ອົງການບໍ່ເອົາຜົນກຳໄລທີ່ເອົາລາຍການຂໍ້ມູນ ແລະ ການບໍລິການທີ່ມີ ຄຸນນະພາບດີມີຢ່າງຫລວງຫລາຍ ແລະເຂົ້າໃຊ້ໄດ້ງ່າຍໃຫ້ແກ່ຜູ້ຊອກຫາວຽກເຮັດງານທຳ.

**ຜູ້ຊອກຫາວຽກເຮັດງານທຳສາມາດ:**

- ໄດ້ຮັບການຊ່ວຍເຫລືອໃນການຊອກຫາວຽກເຮັດງານທຳ
- ປຶກສານຳຜູ້ໃຫ້ຄຳປຶກສາດ້ານການຫາວຽກເຮັດງານທຳທີ່ມີປະສົບການສູງ
- ຮຽນຮູ້ຍຸດທະສາດໃນການຊອກຫາວຽກເຮັດງານທຳ ລວມມີການສຳພາດ, ການສ້າງ ເຄືອຂ່າຍຕິດຕໍ່ ແລະານຂຽນໃບຊີຫວະປະຫວັດເພື່ອຂໍເຮັດການ
- ເຂົ້າຮ່ວມໃນການຝຶກອົບຮົມ ແລະການຝຶກງານໄລຍະສັ້ນ ລວມມີ ການຝຶກອົບຮົມຄອມພິວເຕີແບບພື້ນຖານ
- ທຳການຮູ້ຈັກຮັກແພງກັບຜູ້ຊອກຫາ ວຽກເຮັດງານທຳຜູ້ອື່ນໆ
- ສາມາດຊອກເບິ່ງລາຍການວຽກເຮັດງານທຳໃນທ້ອງຖິ່ນແລະໃນທົ່ວລັດທີ່ໃໝ່
- ຊອກຫາໂອກາດໄດ້ຮັບການຝຶກອົບຮົມ ວຽກ/ຮັບການສຶກສາ
- ສາມາດເຂົ້າໃຊ້ການບໍລິການດ້ານໃນ ຫ້ອງໃຊ້ເຄື່ອງຕ່າງໆ ລວມມີ ຄອມພິວ ເຕີ, ໜັງສື ພິມ, ວາລະສານທາງດ້ານ ວິຊາການ, ປື້ມລາຍຊື່ທຸລະກິດຕ່າງໆ, ເຄື່ອງແຟັກ ແລະ ຈັກກັບປີເອກະສານ, ປື້ມກ່ຽວກັບວິທີການຊອກວຽເຮັດງານທຳ ແລະ ອາຊີບການງານຕ່າງໆ.

MASSACHUSETTS
ONE STOP
CAREER CENTERS

ສູນບໍລິການຊອກຫາງານຄົບວົງຈອນຢູ່ບ່ອນດຽວຢູ່ທົ່ວທຸກບ່ອນໃນລັດ .

ເພື່ອຊອກຫາສູນກາງທີ່ໃຫ້ຄວາມສະດວກເກືອບໝົດທຸກບ່ອນ ພ້ອມທັງລາຍການບໍລິ ການທີ່ບ່ອນນັ້ນມີ, ຊົ່ວໂມງທີ່ເປີດ, ແລະ ທາງໄປຫາບ່ອນນັ້ນໃຫ້ໄປເບິ່ງໃນ **www.mass.gov/careercenters_** ຫລື ໂທລະສັບຫານ້ຳເບີ 877-872-5627.

ເພື່ອເບິ່ງການປະກາດຮັບສະໝັກງານໄປເບິ່ງທີ່

**www.mass.gov/jobquest** ຫລື ໂທລະສັບຫານ້ຳເບີ **888-578-6599**

# ໂຄງການຊ່ວຍເຫລືອ ດ້ານໂພສະນາການເສີມ (SNAP)

ໂຄງການຊ່ວຍເຫລືອດ້ານໂພສະນາການ ເສີມ **(SNAP)** ແມ່ນໂຄງການໃຫ້ອາຫານ ບຳລຸງແກ່ຄອບຄົວແລະບຸກຄົນທີ່ມີ ເງື່ອນໄຂຄົບຖ້ວນຕາມຂໍ້ກຳນົດດ້ານລະດັບລາຍໄດ້ ແລະຊັບສິນໃດນຶ່ງ. ຜົນປະໂຫຍດຂອງ **SNAP** ຊ່ວຍຄອບຄົວທີ່ມີລາຍໄດ້ຕ່ຳໃຫ້ຊື້ ອາຫານທີ່ຮ້ານຄ້າຂາຍອາຫານ, ຮ້ານຂາຍ ຍ່ອຍນ້ອຍແລະຮ້ານຂາຍຢາໄດ້ເກືອບໝົດ ທຸກຮ້ານ. ຜູ້ໄດ້ຮັບຜົນປະໂຫຍດຂອງ **SNAP** ສາມາດທັງເຮັດວຽກແລະສາມາດມີສິດໄດ້ຮັບຜົນປະໂຫຍດຂອງ **SNAP** ນຳ.

**SNAP Hotline**
(ເມື່ອກ່ອນເອີ້ນວ່າ **Food Stamps)**
**1-866-950-FOOD (3663)**
**www.mass.gov/snap**

**Commonwealth of Massachusetts**

**Deval L. Patrick, Governor**

**Timothy P. Murray, Lt. Governor**

**Executive Office of Labor and Workforce Development**
**Joanne F. Goldstein, Secretary**

ນາຍຈ້າງທີ່ໃຫ້ໂອກາດແກ່ຄົນຢ່າງເທົ່າທຽມກັນ-ມີການຊ່ວຍເຫລືອເພີ້ມເຕີມໄວ້ໃຫແກ່ບຸກຄົນເສັຽອົງຄະຖ້າຫາກວ່າຮ້ອງຂໍ